# ໃບລານ ກັບ ຊາວພຸດຫລວງພະບາງ 7

**ພຣະອາຈານ ອ່ອນແກ້ວ ສິດທິວົງ**

ປະຊາຊົນລາວ ຕັ້ງແຕ່ເໜືອຮອດໃຕ້ ເມື່ອເວົ້າເຖິງໜັງສືຜູກໃບລານແລ້ວ ໃຜໆກໍຮັບຮູ້ ແລະ ເຂົ້າໃຈວ່າເປັນເອກະສານສຳຄັນ ເປັນສິ່ງບັນຈຸຂໍ້ມູນຄວາມຮູ້ ທັງຝ່າຍຄະດີໂລກ ແລະ ຄະດີທຳ ອັນສືບເນື່ອງມາຈາກແຮງງານ ແລະ ພູມປັນຍາຂອງບັນພະບຸລຸດລາວ ທີ່ຂີດຂຽນໄວ້ສືບໆກັນມາ ທັງທີ່ເປັນອັກສອນລາວບູຮານ ແລະ ອັກສອນທຳ ມັນເປັນເງື່ອນໄຂອັນສຳຄັນທີ່ສະທ້ອນໃຫ້ເຫັນສັງຄົມລາວໃນຍຸກສະໄໝຕ່າງໆ ທີ່ຜ່ານມາວ່າລາວເຮົາກໍເປັນປະເທດນຶ່ງທີ່ມີນັກປາດບັນດິດ ໜັງສືຜູກໃບລານລາວ ໄດ້ເຮັດໃຫ້ຊາວບ້ານທຳມະດາກາຍເປັນນັກຕໍ່ສູ້ ເປັນນັກວິຊາການ ເປັນຄູບາອາຈານ ເປັນນັກປາດບັນດິດ ມາຫລາຍຕໍ່ຫລາຍແລ້ວ ໃນອະດີດນັບໄດ້ວ່າມັນເປັນມໍລະດົກທາງດ້ານວັນນະຄະດີຂອງລາວໂດຍແທ້ ເປັນສົມບັດຂອງຊາດ ມີປະຫວັດສາດຍາວນານ ຈົນບໍ່ມີໃຜສາມາດຮູ້ໄດ້ເລີຍວ່າ ໃບລານຜູກນີ້ ເພິ່ນຂຽນໃສ່ໃບລານມາແຕ່ປີໃດ ແລະ ແມ່ນໃຜເປັນຜູ້ລິເລີ່ມ

ໃນເມື່ອກ່ອນ ການສຶກສາຂອງລາວເຮົາ ຍັງບໍ່ທັນເປີດກວ້າງ ບໍ່ທົ່ວເຖິງ ຄົນທັງຫລາຍຈິ່ງບໍ່ຄ່ອຍມີໂອກາດໄດ້ຮຽນໜັງສື ຊາວບ້ານທົ່ວໄປຈິ່ງໄດ້ອາໄສວັດເປັນສູນກາງສຶກສາວິຊາຄວາມຮູ້ດ້ານຕ່າງໆ ເລີ່ມຕົ້ນແຕ່ການຮຽນໜັງສືລາວບູຮານ-ໜັງສືທັມ ຊາວບ້ານນຳເອົາລູກຫລານຂອງຕົນ ເຂົ້າບວດເປັນສາມະເນນ ຫລື ພິກຂຸ ເພື່ອສຶກສາຮ່ຳຮຽນນຳຄູບາອາຈານຜູ້ຮູ້

ກ່ອນຈະບວດກໍຕ້ອງໄດ້ມາເຂົ້າເປັນຄະໂຍມ ເພື່ອຮຽນຄວາມຂໍບວດ ຮຽນສິນສິບ ຮຽນປັດຈະເວກຂະນະທັງສີ່ ແລະ ຮຽນເອົາຂະໜົບທຳນຽມ ຫລືຮີດຄອງທີ່ຈະຕ້ອງປະຕິບັດຫລັງຈາກບວດແລ້ວ, ຮຽນໄດ້ແລ້ວພຣະອຸປັດຊາຈິ່ງທຳການບວດໃຫ້ ເມື່ອບວດເຂົ້າມາແລ້ວ ຄູບາອາຈານກໍເອົາໃຈໃສ່ ສິດສອນໃຫ້ຄວບຄູ່ກັບຄວາມຢາກໄດ້ຢາກດີຂອງຜູ້ບວດໃໝ່ ເຊິ່ງມີຄວາມອົດທົນພາກພຽນເປັນເລີດໃນເວລານັ້ນ ວິທີການຮຽນການສອນຂອງເພິ່ນ ກໍຄືການຖ່າຍທອດແບບບຸກຄົນ ສູ່ບຸກຄົນ ເຊັ່ນ :

ຕອນແລງ ຫລັງຈາກໄຫວ້ພຣະແລ້ວ ສາມະເນນກໍເອົ້າໄປວັນທາ ພຣະອາຈານ ໝອບຫົວລົງຮຽນ ໜັງສືສູດ ໂດຍເວົ້າຕາມຫລັງພຣະອາຈານ ເທື່ອລະຂໍ້-ສອງຂໍ້ ຈື່ໄດ້ແລ້ວກໍວັນທາ ອອກໄປເລົ່າໃຫ້ລ່ຽນໄຫລ ເຊິ່ງບູຮານເອີ້ນກັນວ່າ : "ຈົ່ມໜັງສື"

ຕອນເຊົ້າ ຫລັງຈາກສັນຈັງຫັນແລ້ວ ສາມະເນນກໍຈະນຳເອົາໜັງສືຜູກໃບລານ ທີ່ພຣະອາຈານ ເປັນຜູ້ຈັດໃຫ້ ສ່ວນຫລາຍຈະແມ່ນໜັງສືປັນຍາປາຣະມີ ຫລືໜັງສືແທນນ້ຳນົມແມ່ ວາງໜັງສືໃສ່ອັນແລ້ວ ຂາບ 3 ເທື່ອ ວັນທາ ພຣະອາຈານຈັບເອົາໜັງສືຫັນຫລັງໃຫ້ພຣະອາຈານ ເພື່ອພຣະອາຈານຈະໄດ້ເຫັນໜັງສື ງ່າຍ ອາຈານຈະບອກໃຫ້ເທື່ອລະວັກ ເທື່ອລະເຄິ່ງແຖວ-ເທື່ອລະແຖວ ຫລືອາດຈະເປັນເທື່ອລະໜ້າ (ໃບລານ) ກໍມີ ທັງນີ້ກໍອີງໃສ່ຄວາມປຶກ ຄວາມປ່ອງຂອງຜູ້ຮຽນ ເມື່ອເຫັນວ່າຜູ້ຮຽນຈື່ໄດ້ແລ້ວ ພຣະອາຈານກໍບອກໃຫ້ ວັນທາ ພຣະອາຈານ ແລ້ວອອກໄປຊ້ອມການອ່ານດ້ວຍຕົນເອງ ໃຫ້ລ່ຽນໄຫລ ເຊິ່ງບູຮານນິຍົມເອີ້ນກັນວ່າ: "ລຽບໜັງສື"

ຈະເປັນໜັງສືສູດ ຫລືໜັງສືເທດ ເມື່ອເຖິງເວລາຮຽນໃນມື້ຕໍ່ມາ ຜູ້ຮ່ຳຮຽນກໍຕ້ອງໄດ້ຈົ່ມ ແລະ ອ່ານ ບ່ອນທີ່ຮຽນຜ່ານມານັ້ນ ໃຫ້ພຣະອາຈານຟັງ ເບິ່ງວ່າໄດ້ດີ ແລະ ຖືກຕ້ອງແລ້ວບໍ່ ຖ້າໄດ້ດີ ແລະ ຖືກຕ້ອງແລ້ວ ອາຈານກໍ່ບອກຕໍ່ໄປ ຮຽນຢູ່ຢ່າງນີ້ຈົນກວ່າຈະຈົບ

ເມື່ອຮຽນຈົບຜູກທີນຶ່ງ (ປັນຍາປາຣະມີ ຫລືແທນນ້ຳນົມແມ່) ແລ້ວ ອາຈານຈະນຳເອົາໜັງສື ອຸນຫັດ ສະວິໄຊ ມາໃຫ້ຮຽນເປັນຜູກທີ 2 ຈົບແລ້ວ ເພິ່ນກໍເອົາໜັງສືເລື່ອງ ມະຫາວິບາກເຜດ-ຮອມ ມາໃຫ້ຮຽນ ເປັນຜູກທີ 3, ພຣະອາຈານເຫັນວ່າ ສິດຂອງຕົນຈົບຜູກທີ 3 ແລ້ວ ກໍສາມາດອ່ານເອງໄດ້ (ບາງຄົນກໍເປັນ ຄົນໃຈປຶກແດ່ ກໍຕ້ອງໄດ້ຮຽນຜູກທີ 4 ສ່ວນຫລາຍຈະເປັນໜັງສື ມະຫາມູນລະນິພານ) ເພິ່ນກໍຈະນຳເອົາໜັງສື ທີ່ເປັນຄຳສອນຕ່າງໆ ເຊັ່ນ ໜັງສືສຽວສະຫວາດ, ນາງຕັນໄຕ ຫລື ອາດຈະເປັນໜັງສື ຊາດົກຕ່າງໆ ມາໃຫ້ ລຽບ (ອ່ານ) ໃຫ້ເພິ່ນຟັງມື້ລະຜູກ ໂຕໃດບໍ່ໄດ້ເພິ່ນກໍບອກໃຫ້ ເມື່ອອ່ານແລ້ວກໍເກີດຄວາມປະທັບໃຈໃນເລື່ອງ ຕ່າງໆ ເລົ່ານັ້ນ ສຸດທ້າຍຜູ້ກ່ຽວກໍຄົ້ນຄວ້າມາອ່ານເອງ ໂດຍອາຈານບໍ່ຕ້ອງບອກ

ຄູ-ອາຈານສະໄໝບູຮານນັ້ນ ພວກເພິ່ນມີວິທີການສິດສອນທີ່ຍອດຢ້ຽມ ແລະ ຮັບປະກັນບໍ່ວ່າຈະເປັນ ດ້ານຄວາມຮູ້, ຄວາມສາມາດ, ນິດໄສໃຈຄໍ ຈະເປັນຄົນໃຈປຶກ ຫລືໃຈປ່ອງກໍຕາມ ເພິ່ນຈະຕ້ອງສອນໃຫ້ໄດ້ ເທົ່າໆກັນ ຕ່າງແຕ່ວ່າ ໄວຫລືຊ້າຕ່າງກັນເທົ່ານັ້ນ

ໜັງສືຜູກທຳອິດເພິ່ນໃຫ້ຮຽນໜັງສື ແທນນ້ຳນົມແມ່ ທັງນີ້ກໍ່ເພື່ອເຮັດໃຫ້ຜູ້ຮຽນນັ້ນຮູ້ຈັກຄຸນຂອງພໍ່-ແມ່ ເປັນຄົນມີກະຕັນຍູຕໍ່ຜູ້ມີພະຄຸນ ມີຄວາມໂອບເອື້ອອາລີ ມີຄວາມຮັກແພງສາມັກຄີຕໍ່ໝູ່ເພື່ອນ

ໜັງສື ອຸນທັດສະວິໄຊ ກໍ່ເຮັດໃຫ້ຜູ້ຮຽນເກີດຄວາມຮູ້ສຶກຢາກສ້າງບຸນ-ກຸສົນ, ເກີດຄວາມຮັກໜັງສືຢາກສ້າງໜັງສື ຢາກອ່ານ ຢາກເທດສະໜາໃຫ້ຍາດພີ່ນ້ອງ ແລະ ພຸດທະບໍລິສັດທັງຫລາຍຟັງ ຢ້ານກັມ-ເວນຢາກເປັນຜູ້ບໍ່ມີໂຣຄາພະຍາດ

ສ່ວນໜັງສືມະຫາວິບາກ ເຮັດໃຫ້ຜູ້ອ່ານ-ຟັງ ເກີດຄວາມຮູ້ສຶກຢ້ານບາບ-ກັມ-ເວນ ບໍ່ກ້າເຮັດຄວາມຊົ່ວ ແມ່ນແຕ່ຄິດກໍຍັງບໍ່ກ້າ, ຢາກນຳໄປເຜີຍແຜ່ໃຫ້ຍາດຕິພີ່ນ້ອງຂອງຕົນເອງ ຫລືຄົນໃກ້ຊິດຕິດແທດໄດ້ຍິນໄດ້ຟັງ ຮັບຮູ້ ແລະ ເຂົ້າໃຈ ເພື່ອໃຫ້ເກີດຄວາມຢ້ານຕໍ່ບາບ ຫັນມາເຮັດແຕ່ຄວາມດີ ເໝືອນກັບຕົນເອງ

ເມື່ອເກີດຄວາມຮູ້ສຶກຄືແນວນັ້ນ ຜູ້ຮຽນກໍຍິ່ງມີຄວາມມຸ່ງໝັ້ນທີ່ຈະຮຽນ-ອ່ານ-ຂຽນ ອອກເຜີຍແຜ່ມີຄວາມເຄົາລົບນັບຖື ບູຊາຕໍ່ຄູ-ອາຈານ ຍ້ອນເຂົ້າໃຈວ່າ ຕົນເອງຮູ້ບາບ ບຸນ ຄຸນ ໂທດ ປະໂຫຍດ ແລະບໍ່ແມ່ນປະໂຫຍດ ກໍຍ້ອນຄູ-ອາຈານ, ພຣະອາຈານກໍ່ມອບໜ້າທີ່ໃຫ້ໄປເທດຕາງໜ້າ ຕາງຕາ ຕາມບ້ານນ້ອຍບ້ານໃຫຍ່ ເຮືອນນັ້ນ ເຮືອນນີ້ໄປເລື້ອຍໆ ຕາມການນິມົນຂອງຍາດໂຍມເນື່ອງໃນງານບຸນຮີດຄອງປະເພນີວັນບຸນສຳຄັນທາງພຸດທະສາສະໜາ ແລະ ງານເທດສະການຕ່າງໆ ທີ່ທາງການຈັດຂຶ້ນ ອອກຕົນຍາດໂຍມຍາດຕິພີ່ນ້ອງກໍຊ້ອງສາທຸການ ໃຫ້ຄວາມຍ້ອງຍໍສໍລະເສີນຕ່າງໆ ບາງໆ ພຣະ-ແນນ ຜູ້ບວດໃໝ່ກໍຍິ່ງໄດ້ກຳລັງໃຈ ແຂ່ງຂັນກັນເລົ່າຮຽນ ແຂ່ງຂັນກັນອ່ານ ຖາມກັນວ່າ: "ເຈົ້າອ່ານໄດ້ຈັກຜູກຕໍ່ມື້, ຂ້ອຍອ່ານໄດ້ທໍ່ນີ້ຜູກຕໍ່ມື້, ຜ່ານມາເຈົ້າອ່ານຈົບຈັກເລື່ອງແລ້ວ ... " ດັ່ງນີ້ເປັນຕົ້ນ. ຕອນກາງເວັນ ເມື່ອຍາດໂຍມຍ່າງກາຍມາວັດກໍ່ຈະໄດ້ຍິນສຽງພຣະໜຸ່ມເນນນ້ອຍ ລຽນໜັງສືຢູ່ແຊວໆ, ຖ້າບໍ່ໄດ້ຍິນສຽງລຽນໜັງສື ຍາດໂຍມກໍ່ຈະຮ້ອງຖາມ: "ເປັນຈັ່ງໃດ ? ມື້ນີ້ຄືບໍ່ໄດ້ຍິນສຽງຈົວນ້ອຍລຽນໜັງສື ?" ດັ່ງນັ້ນ, ຈິ່ງຕ້ອງໄດ້ອ່ານ ໄດ້ລຽນຢູ່ເປັນປົກກະຕິມັນເປັນການອົບອຸ່ນວັດວາອາຣາມ ແລະ ບ້ານຊ່ອງໄປໃນໂຕ

ເຊິ່ງເປັນໂອກາດອັນດີ ທີ່ທາງພຣະສົງອົງຄະເຈົ້າ ໄດ້ນຳເອົາພູມປັນຍາອັນລ້ຳຄ່າຂອງບັນພະບຸລຸດ ທີ່ບັນທຶກໄວ້ໃນໃບລານ ອອກເຜີຍແຜ່ຢ່າງກວ້າງຂວາງ, ບັນດາອອກຕົນຍາດໂຍມ ກໍເກີດຄວາມເຫລື້ອມໃສສັດທາເປັນຢ່າງຍິ່ງ ຕໍ່ກັບການເຜີຍແຜ່ ແລະພາກປະຕິບັດຂອງພຣະສົງ-ສາມະເນນ, ຢາກນຳເອົາລູກຫລານຂອງຕົນເຂົ້າບວດຮຽນຂຽນອ່ານ ປະຕິບັດສິນທັມ ເພື່ອຈະໄດ້ຄ້ຳຊູ ແລະ ສືບທອດພະພຸດທະສາສະໜາໃຫ້ຍືນຍົງຄົງຖາວອນເທົ້າ 5000 ວັດສາ

ສ່ວນຜູ້ຍິງບໍ່ມີໂອກາດໄດ້ບວດ ຮຽນ-ຂຽນ-ອ່ານ ແຕ່ກໍ່ໄດ້ອາໄສການຟັງເທດຈາກພຣະສົງ-ສາມະເນນ ຈາກການເລົ່າເລື່ອງຕ່າງໆ ຂອງຜູ້ເຖົ້າຜູ້ແກ່, ການບອກສອນຂອງຜູ້ຫລັກຜູ້ໃຫຍ່ ແລ້ວກໍ່ນໍາໄປປະຕິບັດເພື່ອໃຫ້ເກີດບຸນເກີດກຸສົນຕໍ່ໄປ

ການເຜີຍແຜ່ຂອງພຣະສົງອົງຄະເຈົ້າໃນສະໄໝນັ້ນ ແມ່ນມີຄວາມສໍາຄັນ ມີບົດບາດ ແລະມີປະໂຫຍດສູງສຸດຕໍ່ສັງຄົມລາວ ເຮັດໃຫ້ຄົນລາວມີສິນທັມ ມີວັດທະນະທັມທີ່ໜ້າຮັກໜ້າພາກພູມໃຈ ເປັນຄົນມີຈິດໃຈສູງ ມີນໍ້າໃຈຮັກແພງສາມັກຄີເຊິ່ງກັນ ແລະກັນ ໂອບເອື້ອອາລີຕໍ່ກັນ, ທີ່ເປັນໄດ້ຄືແນວນັ້ນ ກໍຍ້ອນຄວາມຮູ້ຈາກໜັງສືຜູກໃບລານ ປະສົມປະສານກັບຄວາມຮູ້ ຄວາມສາມາດຂອງພຣະພິກຂຸສົງ-ສາມະເນນ ໃນສະໄໝນັ້ນ ເຊິ່ງຖືວ່າເປັນກຸ່ມຊົນທີ່ເປັນແບບຢ່າງອັນດີ ມີສິນທັມ ມີວັດທະນະທັມ ມີຄວາມຊື່ສັດເປັນເລີດ ເປັນທີ່ໜ້າເຊື່ອຖືຂອງຜູ້ໄດ້ພົບເຫັນ - ໂອ້ລົມ, ດັ່ງນັ້ນ ການເຜີຍແຜ່ກໍຈຶ່ງເປັນໄປດ້ວຍຄວາມສະດວກສະບາຍ ແລະ ໄດ້ຮັບຜົນສູງສຸດ

ມາເຖິງປັດຈຸບັນ ນະໂຍບາຍຂອງພັກ-ລັດຖະບານເຮົາ ກໍໄດ້ເປີດກວ້າງທາງດ້ານການສຶກສາ ຂະຫຍາຍໂຮງຮຽນໄປທົ່ວທຸກຕົວເມືອງ ລົບລ້າງຄວາມບໍ່ຮູ້ໜັງສືໃຫ້ແກ່ປະຊາຊົນໃນທົ່ວປະເທດ ໄດ້ຢ່າງສິ້ນເຊີງ, ໂຮງຮຽນສົງ ແລະ ໂຮງຮຽນຄະລືຫັດ ແມ່ນເປັນເອກະພາບກັນທາງດ້ານຫລັກສູດການຮຽນການສອນ ແຕກຕ່າງກັນເລັກນ້ອຍ ຄື: ໂຮງຮຽນສົງ ເພີ່ມສາຍວິຊາພຸດທະສາສະໜາ ເຂົ້າຕື່ມເທົ່ານັ້ນ, ດັ່ງນັ້ນ ຊາວບ້ານກໍໄດ້ນໍາເອົາລູກ - ຫລານຂອງຕົນໄປເຂົ້າໂຮງຮຽນຝ່າຍຄະລືຫັດ ແຕ່ກໍຍັງມີບາງບ້ານບາງເຂດ ທີ່ເປັນບ້ານເລັກບ້ານນ້ອຍ ຢູ່ກະແຈກກະຈາຍ ຫ່າງໄກຈາກໂຮງຮຽນ ລໍາບາກການໄປ-ມາ ຊາວບ້ານຈໍານວນນຶ່ງ ກໍໄດ້ນໍາເອົາລູກຫລານຂອງຕົນເຂົ້າບວດ ແລ້ວໄປຝາກໄວ້ນໍາວັດຕ່າງໆ ໃນຕົວເມືອງເພື່ອເຂົ້າໂຮງຮຽນສົງ ກ່ອນຈະບວດ ພໍ່ແມ່ກໍ່ໄປຊອກວັດຢູ່ໃນໂຕເມືອງ ແລະ ສະເໜີໂຕເຂົ້າໂຮງຮຽນກ່ອນ ຖ້າບໍ່ໄດ້ ກໍ່ບໍ່ບວດ

ການບວດກໍ່ບໍ່ເໝືອນເມື່ອກ່ອນ ຜູ້ຈະບວດບໍ່ໄດ້ຄວາມຂໍບວດ ພຣະອຸປັດຊາຕ້ອງໄດ້ບອກໄປເທື່ອລະຄວາມ ເທື່ອລະຂໍ້ ການນົບ ການຂາບ ກໍບໍ່ຖືກແບບ ເມື່ອບວດແລ້ວກໍໄປຢູ່ວັດທີ່ຊອກໄດ້ແລ້ວນັ້ນ ແລະໄປໂຮງຮຽນເລີຍ, ໂດຍບໍ່ໄດ້ໃກ້ຊິດຕິດແທດກັບພຣະອຸປັດຊາອາຈານ. ດັ່ງນັ້ນ ພຣະອຸປັດຊາ-ອາຈານ ຈຶ່ງບໍ່ມີໂອກາດທີ່ຈະສິດສອນບົດສູດ-ເທດ ຂະໜົບທໍານຽມຕ່າງໆ ແຕ່ຢ່າງໃດໃຫ້ໄດ້, ກໍຕ້ອງໄດ້ອາໄສແຕ່ໂຮງຮຽນເປັນຫລັກ ຄູ-ອາຈານທີ່ສິດສອນຢູ່ໂຮງຮຽນນັ້ນ ສ່ວນຫລາຍກໍເປັນຄະລືຫັດ ທີ່ເຄີຍບວດກໍ່ມີ ທີ່ບໍ່ເຄີຍກໍມີ ເມື່ອມີຊົ່ວໂມງສອນ ກໍ່ຂຶ້ນຫ້ອງສອນຕາມວິຊາສະເພາະຂອງເຂົາເຈົ້າ, ບັນດາເຈົ້າອະທິການວັດ ສ່ວນຫລາຍ

ກໍ່ເປັນຄົນເຖົ້າ-ແກ່ ຂາດຄວາມຮູ້ຄວາມສາມາດ ອ່ອນຕໍ່ການສຶກສາອົບຣົມຄົນຍຸກໃໝ່, ອີກປະການນຶ່ງ ພວກເພິ່ນກໍເບື່ອໜ່າຍຄວາມວຸ້ນວາຍຂອງລູກໆຫລານໆ ມາພຽງພໍແລ້ວ ຈຶ່ງຕ້ອງເຂົ້າມາບວດເພື່ອສະແຫວງ ຫາຄວາມສະງົບທາງຈິດໃຈ, ການເວົ້າ-ວ່າ ການບອກ-ສອນ ກໍວ່າໄປຕາມພາສາຂອງຄົນເຖົ້າ ຊໍ້າໆ ຊາກໆ ຈະເຊື່ອ-ຈະຟັງ ຫລືບໍ່ເຊື່ອ-ບໍ່ຟັງ ກໍແລ້ວແຕ່ ເຮັດໃຫ້ພຣະເນນໜຸ່ມນ້ອຍເກີດຄວາມ ເບື່ອໜ່າຍ ລໍາຄານ ບໍ່ເຊື່ອ ຟັງ ດື້ດ້ານຕໍ່ຄໍາສັ່ງສອນຂອງຄູບາອາຈານ ຄູບາອາຈານເອງກໍ່ເກີດຄວາມທໍ້ທ້ໍ ທົດທູ່ໃຈ ທົນທານຕໍ່ຄວາມ ດື້ຄະນອງຂອງພະ-ເນນໜຸ່ມນ້ອຍບໍ່ໄດ້, ພະ-ເນນໜຸ່ມນ້ອຍ ກໍພາກັນມຸ່ງໜ້າຫາຄວາມຮູ້ທາງດ້ານວິຊາ ສະເພາະ ເກີດມີການຊອກຈ້າງຮຽນວິຊາການຕ່າງໆຈາກຊາວບ້ານ ຢ່າງເປັນຂະບວນ ເປັນຕົ້ນແມ່ນ ພາສາ ອັງກິດ ເຊິ່ງເນື້ອໃນບົດສອນລ້ວນແຕ່ກ່ຽວກັບວັດທະນະທໍາຂອງຕ່າງຊາດ ເມື່ອຮຽນແລ້ວກໍຢາກທົດສອບ ຄວາມຮູ້ຂອງຕົນ ເຝິກຊ້ອມການປາກການເວົ້າກັບຊາວຕ່າງປະເທດ ເມື່ອປາກເວົ້າໄດ້ແລ້ວ ກໍ່ເກີດຄວາມ ເຫີກເຫີມເຍີ້ຍິ່ງ ອວດຮູ້ອວດຫລັກ ວາງທ່າທາງບໍ່ຢໍາເກງຜູ້ຫລັກຜູ້ໃຫຍ່ ດູຖູກພຣະເຖົ້າ ພຣະແກ່ ດູຖູກພູມ ປັນຍາ ຂອງບັນພະບູລຸດຂອງຕົນ ລືມໜ້າທີ່ຄວາມເປັນພຣະ-ເນນຂອງຕົນ ບໍ່ຄ່ອຍຈະເອົາໃຈໃສ່ຕໍ່ໜ້າທີ່ ປະລະ ຮີດຄອງປະເພນີໄປ ຂາດຂະໜົບທໍານຽມໃນການປະຕິບັດຕໍ່ຄູບາ-ອາຈານ ຕໍ່ວັດວາສາດສະໜາ ຕໍ່ອອກຕົນ ຍາດໂຍມ, ອ່ອນຕໍ່ທັມ-ວິນັຍ ບໍ່ພາກັນທ່ອງສູດ ຮຽນເທດ ເໝືອນແຕ່ກ່ອນ ໂດຍອ້າງວ່າ ເມື່ອສິກຂາລາເພດ ອອກໄປແລ້ວນໍາໄປເປັນອາຊີບຫາກິນບໍ່ໄດ້ ເຮັດໃຫ້ຄູບາອາຈານຫຍຸ້ງຍາກ ປວດສະໝອງໃນການປົກຄອງ ຈະໄລ່ໜີ ໄລ່ສິກ ເຫດຜົນກໍ່ບໍ່ພຽງພໍ ອີກຢ່າງນຶ່ງ ກໍຍັງມີຄວາມເປັນຫ່ວງອະນາຄົດຂອງລູກສິດ ແລະ ຄວາມ ຈິ່ງຈຽມພໍ່ແມ່ຍາດພີ່ນ້ອງຂອງເຂົາເຈົ້າກໍເປັນບັນຫານຶ່ງ ເພາະເປັນບ້ານນ້ອຍເມືອງນ້ອຍ ເຄືອຍາດພີ່ນ້ອງ ມັນກ່ຽວຂ້ອງເຈືອລະເນືອກັນໄປໝົດ, ພໍ່-ແມ່ ພີ່ນ້ອງຂອງເຂົາເຈົ້າເອງ ກໍຍິນດີສະໜັບສະໜູນ ສົ່ງເສີມໃຫ້ເປັນ ໄປແນວນັ້ນ ເພື່ອຈະໄດ້ເປັນຄົນທັນໂລກ ທັນສະໄໝ ທັນເຫດການ ນໍາບ້ານ-ເມືອງເພິ່ນ ເພື່ອຈະໄດ້ນໍາໄປສ້າງ ຖານະຂອງຕົນເອງໃນອະນາຄົດ ຫລັງຈາກສິກອອກໄປ ພຣະ-ເນນບາງອົງ ອ່ານໜັງສືທັມກໍ່ບໍ່ໄດ້ ຂາດຄວາມຮູ້ ຄວາມສາມາດໃນດ້ານການເຜີຍແຜ່, ເມື່ອຮຽນຈົບຊັ້ນ ມ5 ຫລື ມ6 ແລ້ວ ກໍພາກັນສິກຂາລາເພດ ອອກໄປ ຮຽນຕໍ່ຢູ່ພາຍນອກ ຜູ້ທີ່ຈົບຊັ້ນສູງ ຈົບຈາກຕ່າງປະເທດ ກໍພາກັນຮີບລາສິກຂາອອກໄປຫາວຽກເຮັດງານທໍາ ຄະນະສົງພວກເຮົາກໍຕ້ອງຂາດຜູ້ສືບທອດ ຂາດບຸກຄະ ລາກອນຢູ່ແບບນີ້ລ້າໄປ

ເວົ້າເຖິງຍາດໂຍມ ກໍ່ແຕກຕ່າງເມື່ອກ່ອນຫລາຍ ຫາໂອກາດເຂົ້າວັດຟັງທັມກໍຍາກແລ້ວ ເນື່ອງຈາກ ມີພາລະກິດທີ່ຈະຕ້ອງເຮັດຫລາຍຢ່າງ ຄົນໜຸ່ມກໍ່ຕ້ອງໄປທໍາທຸລະກິດ ຜູ້ມີໜ້າທີ່ທາງລັດຖະການກໍຕ້ອງ ໄປວຽກໄປການ ພວກລູກໆ ກໍໄປໂຮງຮຽນ ສ່ວນຜູ້ເຖົ້າຜູ້ແກ່ ກໍ່ເຝົ້າເຮືອນ ເບິ່ງແຍງພວກລູກ-ຫລານ, ຢູ່ໃນເຮືອນກໍມີສັບພະຂອງພໍໃຈທຸກຢ່າງໄວ້ໃຫ້ພ້ອມ ມີທໍລະທັດໄວ້ໃຫ້ເບິ່ງ ຢາກເບິ່ງເລື່ອງຫຍັງ, ເມື່ອເຖິງວັນສິນ

ຢາກຟັງເທດ ກໍ່ເປີດເບິ່ງ-ຟັງເທດ (ນັບທໍລະທັດຕາງພຣະ). ເມື່ອເຖິງວັນເສົາ-ອາທິດມາ ພວກລູກໆ-ຫລານໆ ກໍພາກັນໄປທ່ຽວ ຕາມແບບວັດທະນະທຳຂອງຊາວຕາເວັນຕົກ ຜູ້ເຖົ້າກໍ່ເຝົ້າເຮືອນຕາມເຄີຍ ກໍ່ເລີຍບໍ່ມີໂອກາດເຂົ້າວັດຟັງທັມ

ແຕ່ມີບາງໂອກາດກໍໄດ້ໄປຮ່ວມບຸນເຮືອນພີ່ໆ ນ້ອງໆ ຄົນໃກ້ຊິດ ບ້ານໃກ້ເຮືອນຄຽງ ດ້ວຍຄວາມຮີບຟ້າວ ເນື່ອງຈາກລູກ-ຫລານ ເອົາລົດມາສົ່ງ-ຮັບ ບາງຄົນກໍ່ບໍ່ຟ້າວ-ຟັ່ງປານໃດ ແຕ່ກໍໃຊ້ເວລາອອກເຮືອນໃຫ້ເປັນປະໂຫຍດ ດ້ວຍການຖາມຂ່າວຄາວກັນ ໂອ້ລົມພັນເຕກັນ ດັງຟົດສະໜັ່ນ ເພາະດົນໆພວກເພິ່ນຈຶ່ງໄດ້ມາພົບກັນກໍເລີຍຟັດໃຫ້ສົມໃຈໄປເລີຍ ເວລາມັນຈຳກັດ, ພຣະສົງ-ສາມະເນນ ຈະສູດຈະເທດກໍປ່ອຍໃຫ້ເປັນເລື່ອງຂອງພຣະສົງໄປ. ເຖົ້າແກ່ບາງຄົນ ກໍບໍ່ມີຄວາມກັງວົນວຸ້ນວາຍກ່ຽວຂ້ອງກັບຄອບຄົວລູກຫລານພໍປານໃດ ລູກຫລານກໍ່ໃຫ້ໂອກາດ ໃຫ້ເວລາໄປຮ່ວມບຸນສິນກິນທານຕາມວັດວາອາຮາມ ຕາມບ້ານໃກ້ບ້ານໄກມີງານບຸນຢູ່ໃສກໍມີໜ້າຢູ່ຫັ້ນ ກໍເລີຍເກີດຄວາມລື້ງແກວ່ນກັບພຣະສົງອົງຄະເຈົ້າ ຄຸ້ນເຄີຍກັບບົດສູດ ບົດເທດໄປໃສກໍໄດ້ຍິນ-ຟັງແຕ່ບົດເກົ່າ ນັ່ງນົບໄປນຳ ເຮັດທຳທ່າໜ້າໃຄ່ຕາຂຽວໃສ່ຄົນອື່ນ ເມື່ອຄົນອື່ນບົ່ນແຊວ ອວດຮູ້ອວດຫລັກໃສ່ໝູ່ເພື່ອນ ອວດຮູ້ອວດຫລັກໃສ່ພຣະໜຸ່ມເນນນ້ອຍ ວ່າຕົນເອງນັ້ນຊຳນານໃນການໄປຮ່ວມບຸນງານ ເປັນຄົນເຄີຍໄດ້ຍິນໄດ້ຟັງມາຫລາຍແລ້ວ ມີຄວາມຮູ້ຄວາມຫລັກຫລາຍແລ້ວ ບາງຄົນກໍທຳຕົນເປັນພໍ່ພຣະ ແມ່ຈົວໄປເລີຍ ພຣະສົງກໍນຳເອົາໜັງສືສະຫລອງ ຫລືອານິສົງທີ່ມັນສັ້ນກະທັດຮັດ ທີ່ພິມເປັນປຶ້ມອັກສອນລາວແລ້ວນັ້ນ ມາເທດ ເພື່ອສະໜອງ ຫລືສະຫລອງສັດທາ, ບາງອົງກໍໃຊ້ໂວຫານປະຕິພານຂອງຕົນເທດປະຕິພານ ເພື່ອສ້າງລົດນິຍົມ ສ້າງຖານະຂອງຕົນ ບາງອົງກໍ່ເທດເພື່ອພຣະພຸດທະສາສະໜາໂດຍແທ້ໜັງສືທັມໃບລານ ກໍເລີຍໝົດໂອກາດທີ່ຈະຖືກນຳມາອ່ານ ນຳມາເທດເຜີຍແຜ່, ຕູ້ໃບລານແຕ່ລະວັດຖືກອັດແຈບ ປິດກະແຈຕາຍ ບໍ່ເຫັນໝອກບໍ່ເຫັນແດດ ຖືກຄົນຍຸກໃໝ່ມອງຂ້າມວ່າເປັນມໍລະດົກ ເປັນຂອງເກົ່າເປັນຂອງໝົດຍຸກສະໄໝໄປໂດຍປະລິຍາຍ ປ່ອຍໃຫ້ເປັນໜ້າທີ່ຂອງ ໜູ-ປວກ ໄພທຳມະຊາດ ໄພສົງຄາມຕະຫລອດເຖິງນັກລ່າກຳໄລຈາກມໍລະດົກຂອງຊາດ

ແຕ່ໃບລານກໍມີໂອກາດໄດ້ຖືກນຳມາເທດ ໃນລະດູເທດສະການບຸນພະເຫວດ (ບຸນມະຫາຊາດ) ເວົ້າເຖິງບຸນພະເຫວດຢູ່ຫລວງພະບາງ ແມ່ນຍັງດຳເນີນການແບບບູຮານຢູ່ ກ່າວຄື: ເລີ່ມຕັ້ງແຕ່ເດືອນ 12 ແຮມເປັນຕົ້ນໄປ ຈົນເຖິງເດືອນ 4, ຕາມບ້ານຕ່າງໆ ແມ່ນເຂົາເຈົ້າຈະປ່ຽນກັນເຮັດບຸນພະເຫວດ

ພິທີຫ້າງຫາກະກຽມ: ກ່ອນຈະເຮັດບຸນປະມານ 10 ວັນ ຫລືອາທິດນຶ່ງ ຊາວບ້ານຈະພ້ອມພຽງກັນມາເຕົ້າໂຮມຢູ່ວັດ ເພື່ອປຸກຜາມບຸນດ້ວຍໄມ້ໄຜ່ ປະດັບປະດາຕົກແຕ່ງດ້ວຍຕົ້ນ ກ້ວຍ-ອ້ອຍ, ທຸງພັນຊັ້ນ, ທຸງໄຊ ...

ຢູ່ຫລວງພະບາງພວກເຮົາ ກໍໄດ້ນຳເອົາອັກສອນທັມເຂົ້າເປັນຫລັກສູດການຮຽນ ຢູ່ຊັ້ນ ມ1 - ມ2, ສ່ວນ ມ3 ຂຶ້ນໄປເຖິງ ມ6 ແມ່ນນຳໃຊ້ອັກສອນທັມມາຂຽນເປັນພາສາບາລີ ໃນພາກວິຊາພາສາບາລີ, ຈັດຕັ້ງກຸ່ມນັກຮຽນ ເຝິກການຂຽນໃບລານດ້ວຍເຫລັກຈານ ໂດຍໄດ້ເຊີນຜູ້ຊ່ຽວຊານໃນການຂຽນໃບລານມາເຝິກອົບຮົມໃຫ້, ພ້ອມກັນນັ້ນ ທາງໂຄງການ ໆລໆ ກໍໄດ້ໄປຕັ້ງສູນປົກປັກຮັກສາໜັງສືຜູກໃບລານ ໄວ້ທີ່ວັດໃໝ່ ສຸວັນນະພູມມາຣາມ ເພື່ອບໍລິການໃນການແນະນຳວິທີການບົວລະບັດຮັກສາ ບໍລິການໃຫ້ແຂກພາຍໃນ ແລະ ຕ່າງປະເທດໄດ້ເບິ່ງໄດ້ຊົມ ຖ້າຜູ້ຊົມໃຊ້ຕ້ອງການໜັງສືປະເພດໃດ ທາງສູນກໍຈະບໍລິການໃນການຈານອອກໃຫ້ຕາມຕົ້ນສະບັບ

ໃນຕໍ່ໜ້ານີ້ ພວກເຮົາໄດ້ມີແຜນການປຸກລະດົມອົບຂວາຍເອົາພຣະສົງ-ສາມະເນນ ແລະ ເຍົາວະຊົນເຂົ້າຮ່ວມກິດຈະກັມໜັງສືຜູກໃບລານ ດ້ວຍຮູບການຕ່າງໆ ເຊັ່ນ: ກິດຈະກຳການອ່ານ ການຂຽນ ການຖາມຕອບບັນຫາກ່ຽວກັບຄວາມຮູ້ຕ່າງໆ ໃນໜັງສືຜູກໃບລານ ໂດຍການໃຫ້ຄະແນນ ແລະຣາງວັນ ເປັນຂອງຂວັນກຳລັງໃຈແກ່ຜູ້ຊະນະເລີດ

ຈັດງານບຸນສະເຫລີມສະຫລອງໜັງສືຜູກໃບລານປະຈຳປີຂຶ້ນ ໂດຍກຳນົດເອົາວັນສ້າງຕັ້ງໂຄງການປົກປັກຮັກສາໜັງສືຜູກໃບລານເປັນເກນ

ເປີດເຝິກອົບຮົມວິທີການປົກປັກຮັກສາໜັງສືຜູກໃບລານ ແລະ ວິຊາພື້ນຖານການຄຸ້ມຄອງບໍລິການຫ້ອງສະໝຸດໃຫ້ແກ່ພຣະສົງ-ສາມະເນນ ປີລະ 1 ຄັ້ງ

ສົ່ງເສີມໃຫ້ກຳລັງໃຈແກ່ຜູ້ມັກຄົ້ນຄວ້າ ມັກອ່ານ ແລ້ວຂຽນອອກມາເປັນປຶ້ມ ອອກສູ່ສາຍຕາມະຫາຊົນ

ສຸດທ້າຍນີ້ : ຂ້າພະເຈົ້າຂໍວິງວອນໃຫ້ຄົນລາວທົ່ວປະເທດ ໂດຍສະເພາະກໍແມ່ນພຣະສົງ-ສາມະເນນໜຸ່ມນ້ອຍ ແລະ ເຍົາວະຊົນ ໃຫ້ເຫັນຄວາມສຳຄັນ ແລະ ຮູ້ຄຸນຄ່າຂອງໜັງສືຜູກໃບລານ ຢ່າໄປເຂົ້າໃຈພຽງວ່າ ເປັນໜັງສືຂອງພຣະສຳລັບໄວ້ເທດ ໄວ້ອ່ານເທົ່ານັ້ນ ມັນເປັນຂອງຄົນລາວໝົດທຸກຄົນ ໃຜຕ້ອງການອ່ານ ຕ້ອງການຄົ້ນຄວ້າກໍໄດ້ທັງນັ້ນ ບໍ່ວ່າຈະເປັນຄົນລາວ ຫລືຊາວຕ່າງປະເທດ ໜັງສືຜູກໃບລານລາວ

ບໍ່ເລືອກຊັ້ນວັນນະ ບໍ່ຈຳແນກຊົນຊັ້ນຊົນເຜົ່າ ມັນເໝືອນກັບແມ່ນ້ຳລຳທານ ໃຜຈະອາບ-ໃຊ້-ດື່ມ ກໍໄດ້ຕາມຊອບໃຈ ເຊິ່ງຄົນລາວເຮົາສາມາດເອກອ້າງກັບຊາວຕ່າງປະເທດໄດ້ວ່າ ບັນພະບູລຸດຂອງພວກເຮົາ ກໍບໍ່ໄດ້ຕ່ຳຕ້ອຍນ້ອຍໜ້າໄປກວ່າຊາດອື່ນໆ ເຄີຍເປັນນັກປາດບັນດິດມາເໝືອນກັນ, ຂໍໃຫ້ໜັງສືຜູກໃບລານລາວຈົ່ງຍືນຍົງຄົງຖາວອນຄູ່ຊາດຄູ່ແຜ່ນດິນລາວ.